ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທຄຕລ BCEL
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ: 093 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 17 NOV 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈໍາໜ່າຍອຸປະກອນໄອທີ ຢູ່ໃນນະຄອນຫລວງວຽງຈັນ.
**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມການປະເມີນລາຄາ ເຮືອນຄິວທັນສະໄໝ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງເຊີນມາຍັງບໍລິສັດ, ຫ້າງຮ້ານ ຕົວແທນຈໍາໜ່າຍອຸປະກອນໄອທີຊາບວ່າ ທຄຕລ ມີຄວາມຕ້ອງການຈັດຊື້ອຸປະກອນ ເຮືອນຄິວທັນສະໄໝ. ເພື່ອມາຮັບໃຊ້ເຂົ້າໃນລະບົບວຽກງານວິຊາສະເພາະຂອງ ທຄຕລ ດັ່ງມີລາຍການຂ້າງລຸ່ມນີ້:

| ລ/ດ | ລາຍການ | ລາຍລະອຽດສະເປັກ | ຈໍານວນ |
|---|---|---|---|
| 1 | ເຮືອນຄິວທັນສະໄໝ | - The Equipment material: Sheet metal Production.<br>- Touch Screen Monitor OEM size ≥21 ນີ້ວ<br>- PC- Core i3, Ram 8GB,SSD 256GB,inc HDMI Port<br>- HP Laserjet M15A (A4Printer)<br>- Epson Thermal Printer TM T88V (80MM)<br>- Barcode and Qr Code Scan<br>- Cabinet Body Webcam C920(1080P)≥2MP<br>- Cabinet Body Speaker Amp<br>- UPS APC ≥ 1500VA<br>- 4 Wheels<br> | 11 ຊຸດ |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈໍາໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**
- **<u>ເອກະສານຊອງທີ 1 (ບໍ່ປິດຊອງ).</u>**

- ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ຕ້ອງມີວິຊາການສະເພາະ ແລະ ມີປະສົບການ ຢ່າງໜ້ອຍ 03 ປີຂຶ້ນໄປ (ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2019, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ).
- ລະບຸຍີ່ຫໍ້, ປີຜະລິດສິນຄ້າ, ປະເທດທີ່ຜະລິດ ຫຼື ມີເອກະສານທີ່ກ່ຽວຂ້ອງ, ລະບຸໄລຍະເວລາໃນການຮັບປະກັນ, ກຳນົດການຈັດສົ່ງສິນຄ້າ, ຜົນງານຜ່ານມາທີ່ເຄີຍສະໜອງອຸປະກອນໄອທີດັ່ງກ່າວໃຫ້ພາກສ່ວນອື່ນ.
- ກຳນົດຍື່ນຊອງມາດຕະຖານເຕັກນິກດ້ານໄອທີ ຈະປິດຮັບວັນທີ **26/11/2020 ເວລາ 11:00** ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C

❖ **<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນ ໃນການປະຕິເສດຜູ້ສະໜອງທີ່ບໍ່ມີເອກະສານປະກອບຄົບຖ້ວນຕາມເງື່ອນໄຂທີ່ກຳນົດໄວ້ນີ້.

❖ **<u>ເອກະສານຊອງທີ 2 (ປິດຊອງ)</u>**.

- ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
- ໃນວັນທີ **03/12/2020 ເວລາ 09:30**ໂມງ ແມ່ນມື້ເປີດຊອງປະມູນແຈ້ງໃຫ້ ບໍລິສັດ, ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.
- ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 03/01/2021) ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **<u>ໝາຍເຫດ:</u>** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- **ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

* ງວດທີ 1: ຊຳລະ 90% ຂອງມູນຄ່າ ພາຍໃນເວລາ 30 ວັນ ຫຼັງໄດ້ຮັບເຄື່ອງຄົບຖ້ວນຖືກຕ້ອງ.

* ງວດທີ 2: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ, ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ , ຖ້າຫາກຜູ້ສະໜອງເມີນເສີຍ ບໍ່ເຂົ້າມາສ້ອມແປງບຳລຸງຮັກສາ ແມ່ນ ທຄຕລ ຈະປັບໄໝ 20% ຂອງມູນຄ່າ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ປະທານຄະນະກຳມະການປະມູນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ


- ສອບຖາມລາຍລະອຽດເພີ່ມເຕີມ:

E-mail: itcenter@bcel.com.la (ສຳລັບສອບຖາມສະເປັກ)
bidcommittee@bcel.com.la